ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ກົມຄວບຄຸມພະຍາດຕິດຕໍ່

ເລກທີ 278/ກຄພຕ

ນະຄອນຫຼວງວຽງຈັນ, ວັນທີ 31 MAR 2020

# ແຈ້ງການ

ເຖິງ: ທ່ານຫົວໜ້າພະແນກສາທາລະນະສຸກ, ນະຄອນຫຼວງ, ແຂວງ ໃນຂອບເຂດທົ່ວປະເທດ.

ເລື່ອງ: ການຜັນຂະຫຍາຍຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີມາດຕະການສະ ກັດກັ້ນ, ກັນການລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID-19.

- ອີງຕາມ: ຄຳສັ່ງ ຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 06.ນຍ ລົງວັນທີ 29 ມີນາ 2020 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ກັນການລະບາດ ຄວບຄຸມ ແລະ ກຽມພ້ອມຮອບດ້ານ ເພື່ອຕ້ານ ພະຍາດ COVID-19
- ອີງຕາມ: ແຈ້ງການຂອງລັດຖະມົນຕີ ກະຊວງສາທາລະນະສຸກ ສະບັບເລກທີ 0405/ສທ ລົງວັນທີ່ 31\3\2020 ວ່າດ້ວຍການຜັນຂະຫຍາຍຄຳສັ່ງຂອງທ່ານນາຍົກລັດຖະມົນຕີກ່ຽວກັບການສະກັດກັ້ນການລະບາດ.
- ອີງຕາມ: ສະພາບມີການ ພົບເຊື້ອ ຂອງພະຍາດອັກເສບປອດສາຍພັນໃໝ່ COVID-19 ໃນສປປ ລາວ ແລະ ການກັບຄືນ ຂອງແຮງງານລາວຈຳນວນຫຼວງຫຼາຍຈາກປະເທດໄທ.

ປະຈຸບັນ ສະພາບການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ COVID-19 ໃນຫຼາຍປະເທດ ຍັງສືບຕໍ່ຂະຫຍາຍເປັນວົງກວ້າງ, ມີການລາຍງານກໍລະນີຕິດເຊື້ອ ແລະ ເສຍຊີວິດເພີ່ມຂຶ້ນໃນແຕ່ລະວັນ. ສປປ ລາວ, ປະຈຸບັນໄດ້ມີຜູ້ຕິດເຊື້ອພະຍາດ COVID-19 ແລ້ວຈຳນວນໜຶ່ງ ແລະ ຍັງມີຜູ້ສຳພັດໃກ້ຊິດກັບບຸກຄົນດັ່ງກ່າວເປັນຈຳນວນຫຼາຍ ພ້ອມກັນນັ້ນ ກໍມີແຮງງານລາວຈຳນວນຫຼວງຫຼາຍເດີນທາງກັບມາຈາກປະເທດໄທ ແລະ ແຈກຢາຍຢູ່ໃນຫຼາຍແຂວງໃນຂອບເຂດທົ່ວປະເທດ, ເຊິ່ງເຮັດໃຫ້ມີຄວາມສ່ຽງສູງທີ່ສຸດທີ່ຈະເກີດມີຜູ້ຕິດເຊື້ອ ແລະ ແຜ່ຂະຫຍາຍເຊື້ອ COVID-19 ອອກສູ່ວົງກ້ວາງ, ຖ້າຫາກບໍ່ປະຕິບັດຕາມມາດຕະການທີ່ທາງລັດຖະບານກໍ່ຄືກະຊວງສາທາລະນະສຸກວາງອອກຢ່າງເຄັ່ງຄັດ, ຈະເຮັດໃຫ້ການແຜ່ພະຍາດແຜ່ກະຈ່າຍໄປສູ່ວົງກ້ວາງ ແລະ ບໍ່ສາມາດ ຄວບຄຸມໄດ້ ແລະ ສົ່ງຜົນກະທົບຕໍ່ລະບົບການບໍລິການສາທາລະນະສຸກ.

ດັ່ງນັ້ນ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ໃຫ້ທົ່ວເຖິງ ແລະ ມີປະສິດທິພາບກົມຄວບຄຸມ ພະຍາດຕິດຕໍ່ ກະຊວງສາທາລະນະສຸກຈຶ່ງຂໍແຈ້ງມາຍັງບັນດາທ່ານ ດັ່ງນີ້:

1. ໃຫ້ພະນັກງານຂະແໜງຄວບຄຸມພະຍາດຕິດຕໍ່ສືບຕໍ່ມາເຮັດວຽກຕາມປົກກະຕິ ແລະ ໃຫ້ຂຶ້ນແຜນບັນຊີລາຍຊື່ພະນັກງານກຽມພ້ອມໃນການເຝົ້າລະວັງ, ສອບສວນ ແລະ ໂຕ້ຕອບການລະບາດ ຂອງພະຍາດ COVID-19 ທີ່ອາດຈະເກີດຂຶ້ນໃນແຂວງຂອງທ່ານ.

3. ຮັບປະກັນໃຫ້ມີພະນັກງານພຽງພໍໃນການເຄື່ອນໄຫວວຽກງານ ຄວບຄຸມການລະບາດຂອງພະຍາດ COVID19, ໂດຍສະເພາະ ທີມງານ ໂຕ້ຕອບໄວ (RRT) ໃນຂັ້ນແຂວງ ແລະ ເມືອງ.

4. ກວດກາຄວາມພ້ອມຂອງພະນັກງານ ແລະ ອຸປະກອນຫ້ອງວິເຄາະ: ເຄື່ອງປ້ອງກັນຕົນເອງຄົບຊຸດ (PPE), ນໍ້າຢາກວດຫາເຊື້ອ, ເຄື່ອງກວດ PCR (ບ່ອນທີ່ໄດ້ຮັບ),ອຸປະກອນເກັບຕົວຢ່າງ ແລະ ອຸປະກອນຫຸ້ມຫໍ່ໃນການຂົນສົ່ງ,ພ້ອມຮັບປະກັນໃຫ້ມີການຂົນສົ່ງແຕ່ແຂວງຫາຫ້ອງວິເຄາະທີ່ກະຊວງກໍານົດໄວ້;

5. ຫ້ອງວິເຄາະທີ່ໄດ້ກໍານົດໄວ້ທົ່ວປະເທດມີ:
   - ໃຫ້ແຕ່ລະແຂວງຮັບຜິດຊອບການຂົນສົ່ງ ທັງຕົວຢ່າງຫາຈຸດກວດ ທີ່ໄດ້ກໍານົດໄວ້ຂ້າງເທິງ ແລະ ທັງຕົວຢ່າງມາກວດຢັ້ງຢືນ ຢູ່ສູນວິເຄາະ ແລະ ລະບາດວິທະຍາ ( ສູນວິເຄາະ ແລະ ລະບາດວິທະຍາ ຈະແຈ້ງລສຍລະອຽດ ກົນໄກການສົ່ງຕົວຢ່າງ ແລະ ປະສານຫາ ແຕ່ລະແຂວງ)

6. ຕຽມພ້ອມໃຫ້ມີສະຖານທີ ເພື່ອເປັນບ່ອນຈໍາກັດບໍລິເວັນ, ແຍກປ່ຽວ ແລະ ປິ່ນປົວ ຖ້າຫາກມີຄົນເຈັບສົງໃສ ແລະ ຕິດເຊື້ອມີຈໍານວນເພີ້ມຂຶ້ນຫຼາຍ;ຫ້ອງວິເຄາະທີ່ຖືກກໍານົດ ປົ່ງມະຕິ COVID-19 ຕ້ອງຮັບປະກັນໃຫ້ມີພະນັກງານປະຈໍາການ 24 ຊົ່ວໂມງ ແລະ ບອກຜົນກວດໃຫ້ໄວພາຍໃນ 8 ຊົ່ວໂມງ (ເຄືອງກວດ PCR ເຄື່ອນທີ່ໃຫ້ບອກຜົນກວດພາຍໃນ 2 ຊົ່ວໂມງ)

7. ປະຕິບັດ ມາດຕະຖານການປ້ອງກັນການຕິດເຊື້ອ COVID-19 ໃນພະນັກງານຮັບໃຊ້ການລະບາດຢ່າງເຂັ້ມງວດ;

8. ການກັ່ນກອງ ແລະ ຊອກຄົ້ນຫາກໍລະນີທີ່ສົງໃສເປັນພະຍາດ COVID-19 ໃຫ້ປະຕິບັດຕາມນິຍາມປັບປຸງໃໝ່ ທີ່ທາງສູນວິເຄາະ ແລະ ລະບາດວິທະຍາໄດ້ແຈ້ງອອກສະບັບເລກທີ່ 721/ສວລ ລົງວັນທີ່ 30 ມີນາ 2020;

9. ເມື່ອຫາກພົບເຫັນຜູ້ຕິດເຊື້ອທີ່ໄດ້ຮັບການຢັ້ງຢືນໃນແຂວງຂອງທ່ານໃຫ້ສົ່ງທີມງານໄປສອບສວນເພື່ອກໍາໃຫ້ໄດ້ລາຍລະອຽດຂອງຜູ້ສໍາຜັດໃກ້ສິດທັງໝົດ ແລະ ປະຫວັດການເດີນທາງຂອງຜູ້ກ່ຽວ ແລະ ໃຫ້ສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ (ຂະແໜງການອື່ນ, ອໍານາດການປົກຄອງແຕ່ລະຂັ້ນ, ນາຍບ້ານໃນການແຕ່ງຕັ້ງຜູ້ຮັບຜິດຊອບຕິດຕາມການຈໍາກັດບໍລິເວນຢ່າງເຄັ່ງຄັດຈົນກ່ວາຈະຄົບ14ວັນ;

10. ໃຫ້ພະແນກສາທາລະນະສຸກແຂວງພົວພັນກັບພະແນກໄປສະນີ, ໂທລະຄົມ ແລະ ການສື່ສານເພື່ອອໍານວຍຄວາມສະດວກໃນການເປີດເບີໂທສາຍດ່ວນສະເພາະແຂວງເພື່ອເປັນຊ່ອງທາງໃຫ້ແກ່ປະຊາຊົນໃນການສອບຖາມຂໍ້ມູນກ່ຽວກັບວິທີປ້ອງກັນ, ສະຖານທີ່ປິ່ນປົວ ແລະ ໃຫ້ສຸຂະສຶກສາໄປພ້ອມ;

11. ໃຫ້ຂະແໜງຄວບຄຸມພະຍາດຕິດຕໍ່ເຮັດແຜນຂໍກໍາລັງສະໜັບສະໜູນຈາກພາກສ່ວນອື່ນໆໃນຂະແໜງສາທາລະນະສຸກ ຫຼື ນໍາໃຊ້ນັກສຶກສາຖ້າມີວິທະຍາໄລສາທາລະນະສຸກໃນກໍລະນີຈໍາເປັນເພື່ອຊ່ວຍເຂົ້າໃນການຕິດຕາມຜູ້ທີ່ສໍາຜັດໃກ້ຊິດທັງໝົດໃນການຕິດຕາມອາການ ແລະ ການປະຕິບັດມາດຕະການຈໍາກັດບໍລິເວນຢ່າງເຄັ່ງຄັດ;

12. ໃຫ້ສ້າງແຜນຄວາມຕ້ອງການງົບປະມານ ທີ່ຈໍາເປັນ ໃນການຈັດຕັ້ງປະຕິບັດບັນດາວຽກງານທີ່ໄດ້ກໍານົດໄວ້ຂ້າງເທິງໃຫ້ມີປະສິດພາບ ແລະ ປະສິດທິຜົນ

13. ລະດົມທຸກພາກສ່ວນຂອງສັງຄົມ ທັງພາຍໃນ ແລະ ຕ່າງປະເທດ ເພື່ອສະໜັບສະໜູນ ແລະ ຊ່ວຍເຫຼືອ ໃນດ້ານຕ່າງໆ ທີ່ຈຳເປັນ ເປັນຕົ້ນແມ່ນ ເຄື່ອງມືທາງການແພດ, ອຸປະກອນປ້ອງກັນການຕິດເຊື້ອ, ຊຸດກວດຫາເຊື້ອພະຍາດຢາປົວພະຍາດ, ທຶນຮອນ ແລະ ດ້ານອື່ນໆ ທີ່ຈຳເປັນ.
14. ໃຫ້ລາຍງານກ່ຽວກັບການຈັດຕັ້ງປະຕິບັດໃຫ້ກົມຄວບຄຸມພະຍາດຕິດຕໍ່ ເປັນແຕ່ລະໄລຍະ;

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ຈົ່ງພ້ອມກັນເອົາໃຈໃສ່ ປະຕິບັດແຈ້ງການຢ່າງເຂັ້ມງວດ.

**ຫົວໜ້າກົມ**

ກົມຄວບຄຸມພະຍາດຕິດຕໍ່

ດຣ. ຣັດຕະນະໄຊ ເພັດສຸວັນ

Dr. Rattanaxay PHETSOUVANH MD. MSc. PhD